# ເຖິງເພື່ອນເກົ່າ

ນາທີ ອິບພະຍິບ

ຫຼາຍວັນກາຍພົ້ນ ກາຍປ່ຽນເປັນປີ
ບໍ່ມີແນວຄວາມຄິດ ຫ່າງລືມແດນເຄົ້າ
ຄິດເຖິງວຽງຈັນເຈົ້າ ວິທຍາລັຍເຄີຍຢູ່
ຄິດເຖິງໝູ່ຮ່ວມຫ້ອງ ຮຽນຊັ້ນແຫ່ງດຽວ

ຈຶ່ງຊ້ຽວຂຽນກອນກ້ອມ ໃຫ້ອ່ານຕາງຄິດ
ມີຈິດໃຈເຖິງກັນ ຕື່ນຕົວຮຽກຮ້ອງ
ມອງຢາກເຫັນໃບໜ້າ ໄຂວາຈາຖາມຂ່າວ
ກ້າວມາຊຸມອີກຄັ້ງ ແດນດ້ານ **ໄອໂອວາ**

ວາສນາເຮົານ້ອຍ ຂໍເພື່ອນທວນຄິດ
ຊີວິດມີຄັ້ງດຽວ ຜ່ານໄປບໍ່ມີໂຄ້ງ
ຂໍຈິດປະສົງຕັ້ງ ຕັດສິນໃຈເພື່ອໝູ່
ມາຄຽງຄູ່ອີກຄັ້ງ ໂຮມເຕົ້າເພື່ອນຝູງ

ອາຍຸສູງກ່ວານີ້ ຄົງບໍ່ອາດເຫັນກັນ
ວັນເວລາໝູນໄປ ແມ່ນໃຜອາດຮູ້ໄດ້
ເຖິງໃຈເຮົາຮຽກຮ້ອງ ກາຍເຮົາບໍ່ຍອມຊ່ອຍ
ຢ່າປ່ອຍໂອກາດນີ້ ກາຍພົ້ນຜ່ານໄປ

ເພື່ອນໄກກໍ່ໃຫ້ແຈ້ງ ອີແມວ (email) ເຖິງກັນ
ຖືວັນ**ໄອໂອວາ** ແມ່ນວາສນາເຮົາຄັ້ງ
ໃຫ້ພາກັນຢຸດຍັ້ງ ຊຸມນູມອີກເທື່ອ
ເມື່ອພົບກັນຄັ້ງນີ້ ຄາວໜ້າຫາກຊິມີ ແທ້ໃດ !!!!!

---